**ການເຂົ້າເຖິງທີ່ໄດ້ມາດຕະຖານສາກົນສູ່ອົງການຈັດຕັ້ງທີ່ໄດ້ມາດຕະຖານສາກົນ:** ຄວາມພະຍາຍາມຂອງອົງການສະຫະປະຊາຊາດ ເພື່ອການພັດທະນາ (UNDP) ເພື່ອເຮັດໃຫ້ບ່ອນເຮັດວຽກຂອງຕົນເປັນບ່ອນທີ່ມີສ່ວນຮ່ວມ ທາງດ້ານຄວາມພິການສໍາລັບຄົນຜູ້ໃດຜູ້ໜຶ່ງ ແລະ ສໍາລັບທຸກຄົນ ຢູ່ ສປປ ລາວ.

ການອອກແບບທີ່ໄດ້ມາດຕະຖານສາກົນເພື່ອຮັບປະກັນວ່າສະພາບແວດລ້ອມທີ່ພວກເຮົາໃຊ້ຮ່ວມກັນ, ພາຍໃນບ້ານ, ຫ້ອງຮຽນ, ບ່ອນເຮັດວຽກ ແລະ ຊຸມຊົນ ໄດ້ຖືກສ້າງຂຶ້ນໃນທາງທີ່ສາມາດໃຊ້ໄດ້ສໍາລັບໝົດທຸກຄົນໂດຍບໍ່ຄໍານຶງເຖິງອາຍຸ, ຂະໜາດ, ຄວາມສາມາດ ຫຼື ຄວາມພິການຂອງເຂົາເຈົ້າ. ມັນສົ່ງເສີມການມີສ່ວນຮ່ວມ ຂອງຄົນທີ່ມີຄວາມພິການ, ເຮັດໃຫ້ເຂົາເຈົ້າສາມາດມີຄວາມສຸກ ໃນຄວາມເປັນເອກະລາດຂອງເຂົາເຈົ້າ ແລະ ສາມາດປະກອບສ່ວນເຂົ້າໃນວຽກງານຂອງສັງຄົມໄດ້ຢ່າງເທົ່າທຽມ, ແລະ ໃນທາງກັບກັນ, ຍັງເປັນການສ້າງເປັນພື້ນທີ່ ທີ່ທຸກຄົນສາມາດໄດ້ຮັບຜົນປະໂຫຍດຮ່ວມກັນອີກດ້ວຍ. ການອອກແບບທີ່ໄດ້ມາດຕະຖານສາກົນຈຶ່ງເປັນຈຸດໃຈກາງໃນການຂັບລຸບັນດາເປົ້າໝາຍການພັດທະນາແບບຍືນຍົງ ແລະ ເປັນຫຼັກການໃຈກາງສໍາຄັນຂອງບັນດາເປົ້າໝາຍເພື່ອໃຫ້ "ທຸກຄົນສາມາດກ້າວໄປພ້ອມກັນ."

ແນວໃດກໍ່ຕາມ, ການເຂົ້າຮອດເຂົ້າເຖິງ ຍັງຄົງເປັນສິ່ງທ້າທາຍຫຼັກຂອງຄົນທີ່ມີຄວາມພິການຢູ່ໃນ ສປປ ລາວ, ເຊິ່ງໄດ້ສົ່ງຜົນກະທົບຕໍ່ຊີວິດຂອງຄົນທີ່ມີຄວາມພິການຫຼາຍກວ່າ 160,000 ຄົນ ແລະ ເພີ່ມການເພິ່ງພາອາໄສຄອບຄົວ ແລະ ໝູ່ຄູ່ຂອງພວກເຂົາ ໃນການດໍາລົງຊີວິດພື້ນຖານຂອງພວກເຂົາໃນແຕ່ລະວັນ. ໂດຍປາສະຈາກການເຂົ້າເຖິງຕຶກອາຄານ, ລະບົບ ການຂົນສົ່ງ ແລະ ສະຖານທີ່ສາທາລະນະຕ່າງໆ, ທີ່ມີການອອກແບບທີ່ໄດ້ມາດຕະຖານສາກົນ, ຄົນທີ່ມີຄວາມພິການໃນທົ່ວປະເທດ ຈຶ່ງບໍ່ສາມາດເຊື່ອມຕໍ່ກັບສັງຄົມ, ຮັບການບໍລິການທາງດ້ານສຸຂະພາບ ແລະ ການຟື້ນຟູທີ່ຈໍາເປັນ, ການສຶກສາຮໍ່າຮຽນ, ແລະ ການຊອກວຽກເຮັດງານທໍາໄດ້. ເຊິ່ງມັນເປັນການນໍາໄປສູ່ການເຮັດໃຫ້ສະພາບສຸຂະພາບ ແລະ ຄວາມພິການ ຂອງເຂົາເຈົ້າຮ້າຍແຮງ ແລະ ຮຸນແຮງຂຶ້ນ, ການກົກໜັງສື, ການຂາດການສຶກສາ, ຫຼື ລວມໄປເຖິງການເປັນຢູ່ທີ່ທຸກຍາກລໍາບາກທີ່ສຸດ.

ຫ້ອງການຂອງອົງການສະຫະປະຊາຊາດ ຢູ່ຖະໜົນລ້ານຊ້າງຖືກສ້າງຂຶ້ນໃນປີ 2008. ໃນປະຈຸບັນ, ພາຍໃຕ້ຫຼັງຄາອັນດຽວກັນ, ແມ່ນມີ 11 ອົງການສະເພາະຂອງອົງການສະຫະປະຊາຊາດ ລວມທັງ UNDP, ເຊິ່ງພວກເຮົາເຮັດວຽກຮ່ວມກັນເພື່ອລຶບລ້າງຄວາມທຸກຍາກທີ່ຍັງຄົງຢູ່, ປົກປັກຮັກສາສິ່ງແວດລ້ອມ ແລະ ດໍາເນີນງານກ່ຽວກັບການປ່ຽນແປງດິນຟ້າອາກາດ, ຮັບປະກັນວ່າທຸກຄົນຢູ່ໃນ ສປປ ລາວ ສາມາດມີສ່ວນຮ່ວມເຂົ້າສັງຄົມ, ແລະ ປະກອບສ່ວນເຂົ້າໃນການພັດທະນາຢ່າງຕໍ່ເນື່ອງ. ຄໍາໝັ້ນສັນຍາຮ່ວມກັນຂອງ UN ຕໍ່ກັບວາລະ 2030 ແມ່ນສະທ້ອນໃຫ້ເຫັນຢູ່ໃນ 18 ແຜ່ນ ເປົ້າໝາຍການພັດທະນາແບບຍືນຍົງທີ່ຖືກຕິດຢູ່ທາງເຂົ້າຂອງຫ້ອງການ ອົງການສະຫະປະຊາດ (UN). ແຕ່ວ່າການອອກແບບຕຶກອາຄານຂອງຫ້ອງການ UN ແມ່ນທຸກຄົນສາມາດກ້າວໄປພ້ອມກັນແລ້ວ ຫຼື ບໍ່?

ສໍາລັບຂ້າພະເຈົ້າທີ່ເປັນຄົນພິການທາງຮ່າງກາຍ ຮູ້ສຶກອຸ່ນໃຈທີ່ຮູ້ວ່າບ່ອນເຮັດວຽກໃຫມ່ຂອງຂ້າພະເຈົ້າ ຢູ່ອົງການ UNDP ໄດ້ພິຈາລະນາເຖິງຄວາມສໍາຄັນຂອງສະພາບແວດລ້ອມທີ່ມີສ່ວນຮ່ວມ ແລະ ສາມາດເຂົ້າຮອດເຂົ້າເຖິງໄດ້. ຫຼາຍຄົນອາດຈະບໍ່ໄດ້ສັງເກດເຫັນການປັບປ່ຽນເລັກໆນ້ອຍໆ ທີ່ສາມາດສ້າງຜົນປະໂຫຍດຕໍ່ກັບການເຄື່ອນໄຫວ, ຄວາມສະດວກສະບາຍ ແລະ ຄວາມເປັນເອກະລາດຕໍ່ກັບຜູ້ໃດຜູ້ໜຶ່ງພາຍໃນຫ້ອງການໄດ້, ເຊິ່ງການມີບ່ອນຈອດລົດທີ່ໄດ້ສະຫງວນໄວ້ໃຫ້, ມີທາງເນີນ ແລະ ຫ້ອງນໍ້າສໍາລັບຄົນພິການ ໄດ້ຊ່ວຍໃຫ້ຂ້າພະເຈົ້າສາມາດເຂົ້າເຖິງສະພາບແວດລ້ອມການເຮັດວຽກໃໝ່ໄດ້ດີຫຼາຍ. ພ້ອມນັ້ນຍັງມີລິຟ ເພື່ອຊ່ວຍໃນການຂຶ້ນລົງລະຫວ່າງຊັ້ນຕ່າງໆ ແລະ ກໍ່ມີທາງຍ່າງທີ່ສາມາດເຂົ້າເຖິງໄດ້ ສໍາລັບລໍ້ເລື່ອນພາຍໃນ ຕຶກອາຄານ.

ເຖິງຢ່າງໃດກໍ່ຕາມ, ມັນກໍຍັງມີຊ່ອງວ່າງສໍາລັບ ການປັບປຸງຢູ່ສະເໜີເພື່ອຮັບປະກັນວ່າ ອາຄານຂອງອົງການສະຫະປະຊາຊາດສອດຄ່ອງກັບມາດຕະຖານການອອກແບບສາກົນ ສໍາລັບ "ຄົນຜູ້ໃດຜູ້ໜຶ່ງ ແລະ ທຸກຄົນ", ໂດຍພິຈາລະນາຈາກຄວາມພິການຫຼາຍປະເພດ ທີ່ແຕກຕ່າງກັນທີ່ມີຜົນຕໍ່ກັບຜູ້ທີ່ມາຢ້ຽມຢາມ, ຄູ່ຮ່ວມງານ, ຫຼື ເພື່ອນຮ່ວມງານຂອງພວກເຮົາ. ການດັດແປງບາງຢ່າງເຫຼົ່ານີ້ໄດ້ຖືກສະເໜີແນະເມື່ອບໍ່ດົນມານີ້ຢູ່ໃນ ບົດລາຍງານການປະເມີນການເຂົ້າເຖິງ ເຊິ່ງດໍາເນີນໂດຍສະມາຄົມຄົນ

ພິການແຫ່ງຊາດ. ການຕິດຕັ້ງປ້າຍເປັນອັກສອນນູນ, ການປູທາງສຳຜັດ, ແລະ ຕິດສັນຍານສຽງຢູ່ໃນລິຟ ເພື່ອເຮັດໃຫ້ຄົນພິການທາງສາຍຕາສາມາດ ນຳທາງໄປທົ່ວທຸກຊັ້ນຂອງ ອົງການສະຫະປະຊາຊາດໄດ້. ການປັບຂະໜາດໂຕໜັງສື, ຄວາມຄົມຊັດຂອງສີ, ແລະ ຮູບພາບຂອງປ້າຍ ຍັງສາມາດຊ່ວຍໃຫ້ຜູ້ທີ່ມີຄວາມຫຍຸ້ງຍາກໃນການອ່ານໃຊ້ສິ່ງອຳນວຍ ຄວາມສະດວກຂອງພວກເຮົາໄດ້ອີກດ້ວຍ. ແລະ ສຸດທ້າຍ, ການຕິດຕັ້ງຮາວຈັບຢູ່ທັງສອງດ້ານຂອງຂັ້ນໄດ ແລະ ປັບປຸງການເຂົ້າເຖິງ ຂອງຜູ້ໃຊ້ລໍ້ເລື່ອນໄປຫາຄລີນິກ ຂອງອົງການສະຫະປະຊາຊາດ, ພວກເຮົາສາມາດ ຮັບປະກັນວ່າ ຄົນທີ່ມີຄວາມຫຍຸ້ງຍາກ ໃນການເຄື່ອນໄຫວສາມາດເຂົ້າເຖິງທຸກພື້ນທີ່ຂອງບ່ອນເຮັດວຽກ ຂອງອົງການ UNDP ໄດ້ຢ່າງປອດໄພ. ເຖິງແມ່ນວ່າຈະມີເລື່ອງເລົ່າ ແລະ ຄວາມຢ້ານ ທີ່ໄດ້ແຜ່ຂະຫຍາຍອອກມາ, ແຕ່ການດັດປັບເຫຼົ່ານີ້ແມ່ນບໍ່ແພງ ແລະ ສາມາດເຮັດໄດ້ງ່າຍ.

ເຖິງຢ່າງໃດກໍ່ຕາມ, ເພື່ອໃຫ້ມີສະຖານທີ່ເຮັດວຽກທີ່ມີສ່ວນຮ່ວມຢ່າງແທ້ຈິງຢູ່ໃນ ສປປ ລາວ, ອົງການ ຈະຕ້ອງກ້າວໄປໄກກ່ວາການດັດປັບທາງກາຍະພາບ ແລະ ພິຈາລະນາການປ່ຽນແປງມາດຕະຖານ ແລະ ການປະຕິບັດທີ່ອາດຈະກີດກັ້ນຄົນພິການຈາກການຖືກຈ້າງງານ ແລະ ບັນລຸສັກກາຍະພາບສູງສຸດ. ເມື່ອບໍ່ດົນມານີ້ ອົງການ UNDP ໄດ້ເລີ່ມດຳເນີນການຕໍ່ກັບຄວາມມຸ່ງໝັ້ນຂອງຕົນທີ່ຈະປັບປຸງບ່ອນເຮັດວຽກ ແລະ ສະພາບແວດລ້ອມການຮຽນຮູ້ທີ່ມີສ່ວນຮ່ວມ, ໂດຍຮັບຮູ້ວ່າທີມທີ່ມີຄວາມຫຼາກຫຼາຍເປັນສິ່ງຈຳເປັນເພື່ອ ແກ້ໄຂສິ່ງທ້າທາຍດ້ານການພັດທະນາທີ່ຫຼາກຫຼາຍຢູ່ໃນປະເທດ. ຫ້ອງການຂອງພວກເຮົາກຳລັງສະທ້ອນໃຫ້ເຫັນເຖິງແນວທາງການປະຕິບັດໃນການແລກປ່ຽນຂໍ້ມູນຂ່າວສານ ແລະ ຜະລິດຕະພັນການສື່ສານ ແລະ ແມ່ນແຕ່ການພັດທະນາວິທີການໃໝ່ໃນການຈັດກອງປະຊຸມ ແລະ ຈັດງານຕ່າງໆ ເພື່ອຮັບປະກັນວ່າຄົນພິການທຸກປະເພດ ສາມາດເຂົ້າເຖິງໄດ້. ການປະກາດຮັບສະໝັກວຽກ ແລະ ການຈັດການຈ້າງງານ ຂອງອົງການ UNDP ປະຈຸບັນກໍໄດ້ມີການລະບຸເນື້ອໃນເຖິງ "ບໍ່ມີການຈຳແນກ" ຂອງອົງການສະຫະປະຊາຊາດ ແລະ ຄຳໝັ້ນສັນຍາຕໍ່ກັບຂະບວນການຄັດເລືອກ ທີ່ສາມາດເຂົ້າເຖິງໄດ້, ເຊິ່ງຮັບປະກັນວ່າຄົນທີ່ມີພື້ນຖານ, ປະສົບການຊີວິດ ແລະ ທັດສະນະຄະຕິທີ່ຫຼາກຫຼາຍ, ໂດຍສະເພາະ ຄົນທີ່ມີຄວາມພິການ, ສາມາດເຂົ້າຮ່ວມທີມງານຂອງອົງການ UNDP ໄດ້.

ໂດຍອີງຕາມຂະບວນການເຄື່ອນໄຫວຂອງສິດທິຄົນພິການໃນທົ່ວໂລກ, "ບໍ່ມີຫຍັງກ່ຽວກັບພວກເຮົາໂດຍປາສະຈາກພວກເຮົາ," ໃນປີນີ້, ອົງການ UNDP ໄດ້ຕ້ອນຮັບເພື່ອນຮ່ວມງານທີ່ມີຄວາມພິການໃຫ່ມສອງຄົນ, ນາງ ບຸນຈັນ ອຸດົມ ແລະ ຂ້າພະເຈົ້າເອງ, ເພື່ອເລັ່ງການປ່ຽນແປງການມີສ່ວນຮ່ວມ ຂອງຄົນພິການໃນທຸກຂະແໜງການຢູ່ໃນ ສປປ ລາວ, ພ້ອມທັງແນະນຳ UNDP ໃນການປ່ຽນແປງແນວທາງການປະຕິບັດຂອງຕົນ, ການສ້າງຄວາມຮັບຮູ້ຂອງພະນັກງານ, ແລະ ແມ່ນແຕ່ການອອກແບບຂອງຫ້ອງການ. ດັ່ງທີ່ເປັນກໍລະນີຢູ່ເລື້ອຍໆ, ພວກເຮົາຕ້ອງເບິ່ງວ່າພວກເຮົາສາມາດປ່ຽນແປງຕົນເອງແນວໃດ ເພື່ອທີ່ພວກເຮົາຈະສາມາດປ່ຽນແປງໂລກໄດ້.

ວັນທີ 24 ຕຸລານີ້ ເປັນວັນຄົບຮອບ 76 ປີ ຂອງອົງການສະຫະປະຊາຊາດ ແລະ ໄດ້ຮັບເອກະສານສ້າງຕັ້ງ, ກົດບັດອົງການສະຫະປະຊາຊາດ, ເຊິ່ງເປັນການຢັ້ງຢືນເຖິງກຽດສັກສີ ແລະ ຄຸນຄ່າຂອງການເປັນມະນຸດທຸກຄົນ ຢູ່ທົ່ວທຸກຫົນແຫ່ງ.

ການຮັບປະກັນສິດທິຂອງຄົນພິການແມ່ນມີຄວາມຈຳເປັນສຳລັບການຍຶດຖືຄຸນຄ່າ ແລະ ຫຼັກການຂອງກົດບັດສະຫະປະຊາຊາດ. ອົງການ UNDP ມຸ່ງໝັ້ນທີ່ຈະຮັບປະກັນວ່າຄົນພິການທັງໝົດຢູ່ໃນ ສປປ ລາວ ແມ່ນມີຄຸນຄ່າ, ມີກຽດສັກສີ ແລະ ສິດທິຂອງເຂົາເຈົ້າໄດ້ຮັບການເຄົາລົບ, ແລະ ໃນບ່ອນເຮັດວຽກຂອງ UNDP, ເຂົາເຈົ້າພົບເຫັນວ່າ ມີສະພາບແວດລ້ອມທີ່ສົ່ງເສີມການເວົ້າບົນພື້ນຖານຄວາມເທົ່າທຽມກັບຄົນອື່ນໆ. ພວກເຮົາຍັງມີຫົນທາງທີ່ຍາວໄກໃນຂ້າງໜ້າ ທີ່ຈະປ່ຽນແປງເພື່ອບັນລຸຄຳໝັ້ນສັນຍານີ້ ແລະ ພວກເຮົາຈະເລີ່ມຕົ້ນການເດີນທາງແຫ່ງການປ່ຽນແປງນີ້ ຈາກພາຍໃນຫ້ອງການຂອງ ອົງການສະຫະປະຊາຊາດ.

ບົດຄວາມໂດຍ:
ນາງ ຊີວີ່ ໄຊເກຍ
ເຈົ້າໜ້າທີ່ສົ່ງເສີມການມີສ່ວນຮ່ວມຂອງຄົນພິການ, ອົງການສະຫະປະຊາຊາດ ເພື່ອການພັດທະນາ ປະຈຳ ສປປ ລາວ